**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

**ທະນາຄານແຫ່ງ ສປປ ລາວ**
ກົມຄຸ້ມຄອງທະນາຄານທຸລະກິດ

ເລກທີ 806 /ກຄທ
ນະຄອນຫຼວງວຽງຈັນ, ວັນທີ 27 ສິງຫາ 2020

# ແຈ້ງການ

**ເຖິງ:** ທ່ານຜູ້ອຳນວຍການທະນາຄານທຸລະກິດ ແລະ ຫົວໜ້າສາຂາທະນາຄານທຸລະກິດຕ່າງປະເທດ.
**ເລື່ອງ:** ເພີ່ມທະວີເອົາໃຈໃສ່ໃນການຈັດຕັ້ງປະຕິບັດປະມວນກົດໝາຍແພ່ງ ແລະ ກົດໝາຍວ່າດ້ວຍທີ່ດິນ.

- ອີງຕາມປະມວນກົດໝາຍແພ່ງ ສະບັບເລກທີ 55/ສພຊ, ລົງວັນທີ 06 ທັນວາ 2018;
- ອີງຕາມກົດໝາຍວ່າດ້ວຍທີ່ດິນ (ສະບັບປັບປຸງ) ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019;
- ອີງຕາມແຈ້ງການເລື່ອງ ເອກະສານທີ່ດິນ ທີ່ໃຊ້ເພື່ອກູ້ຢືມເງິນຈາກທະນາຄານທຸລະກິດ ແລະ ສະຖາບັນການເງິນ ໃນຂອບເຂດທົ່ວປະເທດ ສະບັບເລກທີ 818/ທກ, ລົງວັນທີ 27 ພະຈິກ 2017;
- ອີງຕາມແຈ້ງການເລື່ອງ ການຮັບເອກະສານຢັ້ງຢືນທີ່ດິນມາເປັນຫຼັກຊັບຄ້ຳປະກັນ ສະບັບເລກທີ 494/ກຄທ, ລົງວັນທີ 19 ມິຖຸນາ 2018.

ກົມຄຸ້ມຄອງທະນາຄານທຸລະກິດ (ກຄທ), ທະນາຄານ ແຫ່ງ ສປປ ລາວ ຂໍແຈ້ງມາຍັງທ່ານຊາບວ່າ ຜ່ານການຄຸ້ມຄອງກວດກາ ເຫັນວ່າ ໃນການເຄື່ອນໄຫວສິນເຊື່ອ ຂອງທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດຕ່າງປະເທດ ໄດ້ຮັບເອົາເອກະສານກ່ຽວກັບທີ່ດິນເປັນຕົ້ນ ໃບແຜນທີ່ດິນ, ໃບແຈ້ງເສຍພາສີທີ່ດິນ ທີ່ບໍ່ແມ່ນໃບຕາດິນມາເປັນຫຼັກຊັບຄ້ຳປະກັນ ຊຶ່ງການດຳເນີນການດັ່ງກ່າວ ແມ່ນບໍ່ສອດຄ່ອງກັບກົດໝາຍ ວ່າດ້ວຍທີ່ດິນ. ຄຽງຄູ່ກັນນີ້ ກໍມີທະນາຄານຈຳນວນໜຶ່ງ ໄດ້ດຳເນີນການໂອນລອຍສິດນຳໃຊ້ທີ່ດິນຂອງລູກຄ້າທີ່ນຳໃຊ້ເປັນຫຼັກຊັບຄ້ຳປະກັນເງິນກູ້ ມາເປັນກຳມະສິດຂອງຕົນກ່ອນຈຶ່ງປ່ອຍກູ້ໃຫ້ລູກຄ້າ ຊຶ່ງການດຳເນີນການດັ່ງກ່າວເປັນການລະເມີດຕໍ່ປະມວນກົດໝາຍແພ່ງ. ສະນັ້ນ, ກຄທ ຈຶ່ງແຈ້ງມາຍັງທ່ານ ໃຫ້ເພີ່ມທະວີເອົາໃຈໃສ່ໃນການຈັດຕັ້ງປະຕິບັດກົດໝາຍກ່ຽວຂ້ອງ ໃຫ້ຖືກຕ້ອງ ແລະ ເຂັ້ມງວດ ດັ່ງນີ້:

1. ໃຫ້ທະນາຄານ ຮີບຮ້ອນດຳເນີນການປຶກສາຫາລືກັບລູກຄ້າ, ຊຸກຍູ້ ແລະ ອຳນວຍຄວາມສະດວກໃຫ້ລູກຄ້າ ທີ່ໄດ້ເອົາເອກະສານກ່ຽວກັບທີ່ດິນ ທີ່ບໍ່ແມ່ນໃບຕາດິນມາເປັນຫຼັກຊັບຄ້ຳປະກັນ ໄປສະເໜີຂໍອອກໃບຕາດິນນຳຂະແໜງການກ່ຽວຂ້ອງ ແລ້ວນຳໃຊ້ໃບຕາດິນດັ່ງກ່າວ ເປັນຫຼັກຊັບຄ້ຳປະກັນສິນເຊື່ອປ່ຽນແທນເອກະສານຢັ້ງຢືນທີ່ດິນດັ່ງກ່າວ ໃຫ້ສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງກຳນົດ. ສຳລັບການສະໜອງສິນເຊື່ອໃນອະນາຄົດ ທີ່ຮັບເອົາທີ່ດິນມາເປັນຫຼັກຊັບຄ້ຳປະກັນ ແມ່ນໃຫ້ຮັບເອົາໃບຕາດິນຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ເທົ່ານັ້ນ ເປັນຫຼັກຊັບຄ້ຳປະກັນ;

2. ຫ້າມທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດຕ່າງປະເທດ ດໍາເນີນການ ຫຼື ໃຫ້ລູກຄ້າ ໂອນສິດນໍາໃຊ້ທີ່ດິນ ທີ່ລູກຄ້ານໍາມາເປັນຫຼັກຊັບຄໍ້າປະກັນສິນເຊື່ອ ມາເປັນກໍາມະສິດຂອງທະນາຄານໄວ້ລ່ວງໜ້າ ໃນການພິຈາລະນາສິນເຊື່ອ (ການໂອນລອຍສິດນໍາໃຊ້ທີ່ດິນ);
3. ທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດຕ່າງປະເທດ ທີ່ລະເມີດແຈ້ງການສະບັບນີ້ ຈະຖືກປະຕິບັດມາດຕະການ ຕາມລະບຽບການທີ່ ທະນາຄານແຫ່ງ ສປປ ລາວ ກໍານົດອອກແຕ່ລະໄລຍະ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານຊາບ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

**ອໍານວຍການທົ່ວໜ້າການ**

ທະນາຄານແຫ່ງ ສ. ປ. ປ. ລາວ

ກົມຄຸ້ມຄອງທະນາຄານທຸລະກິດ

ໂພທິຈັນ ທໍາມະເທວາ